RECEIVED
1975 DEC 19 PM 1:36
GOVERNOR'S OFFICE

# IOWA TAI DAM NEWSLETTER

Governor's Task Force For Indochinese Resettlement
1000 East Grand Avenue
Des Moines, Iowa 50319

# ຂ່າວສານຊາວໄທດຳໃນໄອໂອວາ

ສະບາຍດີ! ພວກຂ້າພະເຈົ້າໄດ້ໃຫ້ຄຳໝັ້ນສັນຍາກັບພວກທ່ານວ່າຈະໃຫ້ມີຂ່າວສານຂຶ້ນ ນີ້ຄືສະບັບແລກຂອງຂ່າວສານດັ່ງກ່າວຊຶ່ງໄດ້ຂຽນຂຶ້ນໃນເວລາອັນຟ້າວຟັ່ງ ເພາະວ່າພວກຂ້າພະເຈົ້າຫາກໍ່ກັບຈາກ Fort Chaffee, Ark., ແລະບໍ່ທັນໄດ້ຫັນຄົນມາສູ່ວຽກການເກົ່າໃນການພະຍາຍາມຊ່ອຍເຫຼືອຊາວໄທດຳທີ່ມາຕັ້ງຊີວິດໃຫມ່ໃນຣັດ Iowa.

ເຖິງຢ່າງໃດກໍດີ ພວກຂ້າພະເຈົ້າແນ່ໃຈວ່າພວກທ່ານຄົງຈະຢາກຮູ້ວ່າມີໃຜແດ່ແລະເຂົາເຈົ້າຕັ້ງຖິ່ນຖານຢູ່ໃສ. ສະນັ້ນໃນບັນທ້າຍຂອງຂ່າວສານສະບັບນີ້ຈະມີລາຍຊື່ ທີ່ຢູ່ ເບີໂທຣະສັບຂອງຜູ້ຄໍ້າປະກັນ ແລະຂອງຄອບຄົວອົພຍົບ.

ໃນຊີວິດຂອງພວກເຮົາ ພວກເຮົາທັງໝົດໄດ້ພາກັນປະກອບສ່ວນໃຫ້ຄວາມອົບອຸ່ນທາງດ້ານຈິດໃຈຊຶ່ງກັນແລະກັນໃນການເປັນມະນຸດດ້ວຍກັນ.. ແຕ່ແລ້ວຂ້າພະເຈົ້າຮູ້ດີວ່າຍັງມີບັນຫາຫຍຸ້ງຍາກຫລາຍປະການ. ຂໍໃຫ້ໂທຣສາຍຫາພວກຂ້າພະເຈົ້າທາງ Toll-free (1-800-362-2780) ໂດຍພວກທ່ານບໍ່ຈຳເປັນຈະຕ້ອງເສັຽຄ່າ (ເມື່ອພວກທ່ານຕ້ອງການຄວາມຊ່ອຍເຫຼືອ, ເພື່ອສົ່ງຂ່າວຄາວຕ່າງໆ ຫຼືເພື່ອເວົ້າລົມກັນທັມດາ. ຖ້າມີການສຸກເສີນເກີດຂຶ້ນຍາມກາງຄືນ ຫຼືຍາມວັນເສົາວັນອາທິດ ຫຼືວັນພັກ ຂໍຢ່າໄດ້ເກງອົກເກງໃຈ ຕິດຕໍ່ກັບເຈົ້າໜ້າທີ່ຂອງສູນກາງຄໍ້າປະກັນຊາວອົພຍົບ ທີ່ບ້ານພັກຂອງເຂົາເຈົ້າ. ເຈົ້າໜ້າທີ່ຂອງສູນກາງມີດັ່ງຕໍ່ໄປນີ້:

Colleen Shearer - 515/989-0313
Jill Guam - 515/282-3581
Dick Freeman - 515/265-8485
Jack Spear - 515/225-1838
ສົມສັກ ໄຊທອງເພັດ - 515/288-1144
ກາ ອິນ - 515/280-7521

Hello! Sahm-by-dee! We promised you a newsletter so here's the first issue. This one is being written in a hurry because we have just returned from Fort Chaffee, Ark., and we haven't yet been able to turn our actions to matters beyond the initial resettling efforts of bringing the Tai Dam people into Iowa to their new homes.

We know, however, that you all want to know who is involved and where they are, so the list included at the end of this newsletter will provide you with the names, addresses and phone numbers of sponsors and refugees.

We've all been involved in the most heart-warming, human endeavor of our lives -- and yet I know there are many difficulties. Please call us on the toll-free phone (1-800-362-2780) to seek help, to pass on information, or just to talk. If any emergencies arise at night or on weekends and holidays, feel free to contact the Task Force members at their homes. Our numbers are as follows:

Colleen Shearer - 515/989-0313
Jill Quam - 515/282-3581
Dick Freeman - 515/265-8485
Jack Spear - 515/225-1838
Somsak Saythongphet - 515/288-1144
Cam Uynh - 515/280-7521

(ສໍາລັບຊາວໄທດໍາໝົດທຸກຄົນ: ໃຫ້ທຸກຄົນເຂົ້າໃຈວ່າການຕິດຕໍ່ທາງໂທລະສັບທາງໄກນັ້ນເປັນການສິ້ນເປືອງເງິນ. ຂໍໃຫ້ພາກັນພະຍາຍາມຕິດຕໍ່ມາຫາພວກຂ້າງວັນທາງ Toll-free (1-800-362-2780) ເພາະວ່າການຕິດຕໍ່ມາທາງດັ່ງກ່າວພວກທ່ານຫຼືຜູ້ອຸປະຖໍາພວກທ່ານຈະບໍ່ໄດ້ເສັຽຄ່າແຕ່ປະການໃດ.)

ຂ້າພະເຈົ້າເຊື່ອແນ່ວ່າພວກທ່ານຄົງຈະເຂົ້າໃຈດີວ່າຄວາມປາຖະໜາອັນຮີບດ່ວນແລະສໍາຄັນຍິ່ງຂອງພວກຂ້າພະເຈົ້າໃນການວາງໂຄງການຊ່ວຍເຫຼືອພວກທ່ານນັ້ນກໍຄືຢາກໃຫ້ທຸກສິ່ງທຸກຢ່າງລຸລ່ວງໄປດ້ວຍດີທຸກປະການ. ພວກຂ້າພະເຈົ້າໄດ້ພາກັນເຮັດວຽກຕັ້ງວັນຕັ້ງຄືນ, ວັນເສົາວັນອາທິດ ເພື່ອໃຫ້ວຽກການແລ່ນໄປດ້ວຍດີ.. ແລະຈະໄດ້ພາກັນເພີ່ມເຮັດຕໍ່ໄປອີກເລື້ອຍໆ. ແຕ່ໃຫ້ເຂົ້າໃຈວ່າພວກຂ້າພະເຈົ້າມີແຕ່ຈໍານວນໜ້ອຍຄົນ ພວກທ່ານນັ້ນກໍມີຫຼາຍຄົນ. ດັ່ງນັ້ນ ອາດມີບາງສິ່ງບາງຢ່າງທີ່ພວກຂ້າພະເຈົ້າບໍ່ສາມາດສນອງຄວາມຕ້ອງການຂອງພວກທ່ານໄດ້ໃນທັນທີທັນໃດທີ່ພວກທ່ານຕ້ອງການ. ຖ້າເປັນໄປດັ່ງກ່າວແລ້ວກໍຂໍອະໄພພວກຂ້າພະເຈົ້າດ້ວຍ.

ກ່ຽວກັບການສຶກສາ: ເປັນໜ້າເສັຽໃຈທີ່ກົງຈັກການຕ່າງໆເນີນງານໃນລະບອບປົກຄອງແບບປະຊາທິປະໄຕນັ້ນຫມູນຊ້າເກີນໄປທີ່ລັດຖະບານບໍ່ສາມາດໃຫ້ຄໍາຕອບທຸກສິ່ງທີ່ເກີດຂຶ້ນແຕ່ລະຍະເວລາຢ່າງທັນທີທັນເວລາ. ຂ່າວຄາວທີ່ບໍ່ຖືກຕ້ອງແລະແນ່ນອນອັນເຮັດໃຫ້ເກີດມີຄວາມສັບສົນຢູ່ເລື້ອຍໆ ທັງທາງຂອງລະບຽບອັນໃໝ່ທີ່ອອກມາໃໝ່ຢູ່ເລື້ອຍໆໃຫ້ສັງຄົມ. ສະຖານະການດັ່ງກ່າວນີ້ເປັນຄວາມຈິງສໍາລັບດ້ານການສຶກສາ. ໃນຂັ້ນລັດຖະບານກາງກໍຍັງມີຄວາມສັບສົນດັ່ງກ່າວນີ້ຢູ່. ໃນຂັ້ນທ້ອງຖິ່ນແລະຂັ້ນລັດ, ບາງຄັ້ງບາງຄາວຂ້າພະເຈົ້າເອງກໍມີຄວາມຮູ້ສຶກວ່າແຕ່ລະບຸກຄົນຈະຕ້ອງຊ່ວຍຕົນເອງສະເໝີໄປ. ກົງກັນຂ້າມ, ປາສະຈາກສິ່ງຕ່າງໆບາງທີ່ພວກທ່ານອາດຈະໄດ້ຍິນ, ສິ່ງສໍາຄັນທີ່ພວກທ່ານຄວນຮູ້ໄວ້ກໍຄືຊາວໄທດໍາແຕ່ລະຄົນມີສິດໄດ້ຮັບການຊ່ວຍເຫຼືອເພື່ອການສຶກສາ. ໃນການຂໍທຶນຈາກລັດຖະບານກາງ ຂໍໃຫ້ບອກກັບເຈົ້າໜ້າທີ່ໂຮງຮຽນຂອງພວກທ່ານວ່າໂຮງຮຽນໃນທ້ອງຖິ່ນຂອງພວກທ່ານຈະໄດ້ຮັບເງິນຊ່ວຍເຫຼືອດັ່ງກ່າວ $300 ຕໍ່ນັກຮຽນຜູ້ນຶ່ງ. ເພື່ອບໍ່ໃຫ້ເກີດມີຄວາມສັບສົນໃຫ້ເຂົາ

(To the Tai Dam people: Remember that long-distance phone calls cost money. Always try to call us during the day at 1-800-362-2780 because that will cost nothing to you or to your sponsor.)

I'm sure you know of our fervent wish that all the plans to provide you with help were already accomplished. We are working many hours of our own time each week to bring this about -- and we will continue to do so. But, try to remember that there are few of us and many of you and that we may not be able to attend to all of your needs as quickly as we all would like. We rely on you to let us know!

Regarding education: Unfortunately, the wheels turn slowly in a democratic form of government. Government responds slowly to events that happen quickly. Misinformation tends to perpetuate itself and confusion reigns while rules and regulations are being created. This has been the case in the area of education. Even at the federal level confusion still exists. Sometimes I have the feeling at our local and state levels that it's "every man for himself". The most important information you should know, however, is that, contrary to what you may have heard, the Tai Dam people do qualify for all the educational assistance programs. Tell your school administrators that the school districts do qualify for the $300 per pupil aid. To avoid any problems, tell them to use the designation "Indochinese" instead of "Tai Dam" on all forms they submit to obtain aid.

ເຈົ້າຊ່ວຍລົງທະບຽນໃຫ້ເປັນຊາວອິນດົຈີນ ແທນທີ່ຈະໃສ່ເປັນຊາວໄທດຳ. ຄຳແນະນຳ ດັ່ງກ່າວແມ່ນໄດ້ມາຈາກເຈົ້າໜ້າທີ່ຂອງກະ ຊວງສຶກສາ ສາທາລະນະສຸກ ແລະສົງເຄາະປະຈຳ Fort Chaffee ທີ່ຫາກໍກັບຈາກ Washington, D.C.

<u>ກ່ຽວເລື່ອງການຊ່ວຍເຫຼືອດ້ານການພະຍາ ບານຕົວ</u>: ສຳລັບຜູ້ຄ້ຳປະກັນທັງຫຼາຍ, ຖ້າ ພວກທ່ານຫາກຍັງບໍ່ທັນໄດ້ນຳພາຄອບຄົວ ອົພຍົບພວກທ່ານໄປຈົດທະບຽນຂໍໃບພະ ຍາບານຕົວ (Medicaid) ຈາກພະແນກສົງ ຄົມສົງເຄາະກໍຂໍໃຫ້ພາເຂົາເຈົ້າໄປ. ກະລຸ ນາຢ່າໄດ້ຂໍສະແຕມເພື່ອຊື້ອາຫານ (Food Stamps). ດັ່ງທ່ານຮູ້ດີແລ້ວວ່າທາງສູນ ກາງຄ້ຳປະກັນຊາວອົພຍົບຈະພະຍາຍາມ ໃຫ້ການຊ່ວຍເຫຼືອພວກທ່ານທາກດ້ານ ຈົນກວ່າທາງສູນກາງຈະໝົດງົບປະມານ. ທາງ ສູນກາງຈະພະຍາຍາມເອົາໃຈໃສ່ດ້ວຍແຜນ ຂັ້ນນັ້ນນວນເພື່ອໃຫ້ທຸກໆຄົນທີ່ເຮັດ ການໄດ້ມີວຽກການເຮັດໄວເທົ່າທີ່ຈະໄວ ໄດ້. ຫວັງວ່າຄົງຈະບໍ່ມີຄອບຄົວໄທດຳໃດ ຕົກຢູ່ໃນຄວາມຮັບຜິດຊອບຂອງແຜນກ ສົງເຄາະຕລອດໄປ. ຊາວໄທດຳແຕ່ລະ ຄົນກໍບໍ່ຢາກໃຫ້ເປັນໄປດັ່ງນັ້ນເໝືອນ ກັນ ເພາະວ່າຄວາມຕັ້ງໃຈຂອງພວກເຮົາ ໃນການຮັບປະກັນເຂົາເຂົາເຈົ້າມາກໍເພື່ອ ຢາກໃຫ້ເຂົາເຈົ້າສາມາດຊ່ວຍເຫຼືອຕົນ ເອງໄດ້ໄວເທົ່າທີ່ຈະໄວໄດ້, ຊຶ່ງໝາຍ ເຖິງຈະຕ້ອງສາມາດຊອກວຽກການໃຫ້ເຂົາ ເຈົ້າໄດ້.

<u>ກ່ຽວເລື່ອງການທຳງານ</u>: ຖ້າວ່າພວກທີ່ ເຮັດການໄດ້ໃນຄອບຄົວຂອງພວກທ່ານ ຫາກຍັງບໍ່ທັນໄດ້ວຽກການເຮັດເທື່ອແລະ ທາງພະແນກຫາງານໃນບ້ານຂອງພວກ ທ່ານຍັງບໍ່ໄດ້ຕິດຕໍ່ກັບພວກທ່ານເທື່ອ ກໍຂໍໃຫ້ພວກທ່ານຕິດຕໍ່ກັບເຂົາເຈົ້າ. ເມື່ອເປັນແນວໃດແລ້ວກະລຸນາລາຍງານ ໃຫ້ພວກຂ້າພະເຈົ້າຮູ້ນຳດ້ວຍເພື່ອຈະໄດ້ ຊິດຊ່ວຍທັນທີຄວາມຈຳເປັນ ເພາະວ່າເລື່ອງ ດັ່ງກ່າວເປັນເລື່ອງທີ່ສຳຄັນຍິ່ງ.

<u>ກ່ຽວກັບເລື່ອງການຕິດຕາມຢ້ຽມຢາມ ເປັນການສ່ວນຕົວ</u>: ໃນການຕິດຕໍ່ກັບ ພວກທ່ານເພື່ອໃຫ້ທົ່ວເຖິງກັນແລະວ່ອງ ໄວ ພວກຂ້າພະເຈົ້າໄດ້ຂໍຄວາມຊ່ວຍເຫຼືອ ນຳພະແນກສັງຄົມຕາມທ້ອງຖິ່ນທີ່ໃກ້ ຊິດກັບພວກທ່ານ. ການຊ່ວຍເຫຼືອດັ່ງກ່າວ ບໍ່ໄດ້ໝາຍເຖິງເພື່ອການສົງເຄາະແຕ່ ປະການໃດ ແຕ່ຫາກວ່າພະແນກດັ່ງກ່າວ

This is on the advice of an HEW official at Fort Chaffee who just returned from Washington, D. C. with the information.

<u>Regarding medical assitance:</u> Sponsors, if you haven't already done so, please register your refugee family for Medicaid at your local Department of Social Services county office. Please <u>do</u> <u>not</u> register them for welfare payments and food stamps. As you know, the Task Force plans to stand back of you should emergencies arise until our funds expire. With planning and with efforts to place all employable people in jobs as quickly as possible we are hopeful that <u>not one single</u> Tai Dam family will be on the Iowa welfare roles. The Tai Dam people do not want this any more than we do and our whole approach has been to bring them to self-sufficiency as quickly as possible -- and this means jobs!

<u>Regarding employment:</u> If the employables in your refugee family are not yet employes, and if our local Employment Service office has not yet contacted you -- call them! Let us know what is happening in this vital area so we can respond to your needs.

<u>Regarding follow-up personal visits:</u> In order to get to you all as quickly as possible, we are seeking the aid of the Social Services office nearest each of you. This doesn't mean it's a welfare situation. It only means that these people can get to you quickly because they are located geographically close to you,